ຖ້າຈັກເກັບເງິນຊື້ (POS) ບໍ່ເຮັດວຽກແຈະມີຫຍັງເກີດຂຶ້ນ?

ຖ້າທ່ານປາກຊື້ອາຫານທີ່ມີເງື່ອນໄຂໄດ້ຮັບໃນການຊ່ວຍເຫລືອຄ້ານອາຫານຂອງທ່ານ, ແລະຈັກເກັບເງິນຊຳພັດບໍ່ເຮັດວຽກ ຫລືບໍ່ມີຜູ້ໃດຢູ່ໃນຮ້ານ, ສມຽນເກັບເງິນຈະຕື່ມເຈ້ຍຮ່າງເອກະສານຍື່ງເຄັ້ນວ່າໃບບິງອາຫານການຊ່ວຍເຫລືອ (Food Benefit Voucher). ສມຽນເກັບເງິນຈະບັນທຶກຂຽນເລກຂອງບັດ EBT ຂອງຮັດວໍຊິງຕັນ ພ້ອມທັງຈຳນວນເງິນ. ຢ່າເອົາເລກ PIN ຂອງທ່ານໃຫ້ຜູ້ເກັບເງິນ. ຜູ້ເກັບເງິນຈະໄຫກວດເບິ່ງໃຫ້ວ່າທ່ານມີເງິນເຫລືອພໍຊື້ອາຫານໃນບັນຊີບັດອາຫານທໍ່ນັ້ນ ຂອງທ່ານບໍ່. ຖ້າມີເງິນພຽງພໍໃນບັນຊີບັດອາຫານຂອງທ່ານ, ທ່ານຈະຖືກຖາມໃຫ້ເຊັນໃບບິງອາຫານ ແລະກໍ່ຈະເອົາໃບສຳເນົາໃຫ້ທ່ານ. ມັນເປັນສິ່ງສຳຄັນທີ່ທ່ານຈະຕ້ອງເກັບໃບສຳເນົານັ້ນໄວ້ ເພື່ອທ່ານຈະໄດ້ຄິດໄລ່ຫັກຈຳນວນອອກຈາກຈຳນວນເງິນທີ່ເຫລືອທີ່ສະແດງບອກໃນໃບຮັບເງິນຂອງບັດ EBT ທີ່ທ່ານຊື້ເທື່ອສຸດທ້າຍທີ່ຜ່ານມາ. ເຮັດແນວນີ້ມັນຈະບອກໃຫ້ທ່ານຮູ້ຈຳນວນເງິນໃນບັນຊີປະຈຸບັນ. ທາງຮ້ານຄ້າບໍ່ສາມາດຈັດການໆຊ່ວຍເຫລືອຣະບົບເງິນສົດໄດ້.

ຂ້າພະເຈົ້າໄປຖາມພັນກງານທະນາຄານ ແລະຖາມຄຳຖາມເຣື່ອງບັນຊີເງິນໃນບັດ EBTຂອງຂ້າພະເຈົ້າໄດ້ບໍ່?

ບໍ່, ທ່ານພຽງແຕ່ອາດຖອນເງິນຈາກຈັກຖອນເງິນ ATM ໃດໜຶ່ງ ຫລືຜ່ານການເອົາເງິນສົດ/ການຖອນເງິນສົດທໍ່ນັ້ນ ຕາມຮ້ານຄ້າທີ່ມີສ່ວນຮ່ວມນຳ. ຖ້າທ່ານມີຄຳຖາມ, ໃຫ້ໄປຫາຫ້ອງການບໍຣິການຜູ້ຮັບການຊ່ວຍເຫລືອ ຫລືຖາມຜູ້ເຮັດວຽກສັງຄົມໃນສຳນວນຂອງທ່ານ.

ຖ້າຂ້າພະເຈົ້າມີເງິນລຸດ $10.00 ໃນບັນຊີການຊ່ວຍເຫລືອເງິນສົດຂອງຂ້າພະເຈົ້າຢູ່ບັດ EBT ຂອງຮັດວໍຊິງຕັນ, ເຮັດແນວໃດຂ້າພະເຈົ້າຈຶ່ງຈະຖອນອອກໄດ້?

ທ່ານສາມາດຊື້ເຄື່ອງຢູ່ຈຸດຂາຍເຄື່ອງ ຫລືເຮັດຜ່ານຣະບົບເອົາເງິນສົດຄືນຕາມຮ້ານຄ້າທີ່ມີສ່ວນຮ່ວມທັງຫລາຍ ເພື່ອເອົາເງິນຈຳນວນເຫລົ່ານີ້ໄດ້.

ມີການຄິດຄ່າທັມນຽມໃດຕ່າງໆ ຫລືການຄິດຄ່າປັບໃດບໍ່ໃນການທຳການຊື້ຂາຍໃນການໃຊ້ບັດ EBT ຂອງຮັດວໍຊິງຕັນຂອງຂ້າພະເຈົ້າ?

ບໍ່ເຄີຍມີການຄິດຄ່າທັມນຽມໃດໆເລີຍໃນການບໍຣິການທຸຣະກິດສຳລັບການໃຊ້ບັດການຊ່ວຍເຫລືອອາຫານຂອງທ່ານ ເພື່ອຊື້ອາຫານກັບບັດ EBT ຂອງຮັດວໍຊິງຕັນ. ແລະກໍ່ບໍ່ມີການຄິດຄ່າການທຸຣະກິດສຳລັບການໃຊ້ບັດການຊ່ວຍເຫລືອເງິນສົດຂອງທ່ານເພື່ອຊື້ອາຫານຫລືຖອນເງິນກັບຈັກຈ່າຍເງິນບ່ອນຊື້ເຄື່ອງ (POS). ຢູ່ບ່ອນຈັກຖອນເງິນ ATMs ທັງຫລາຍນັ້ນ, ຈະມີການຫັກຄ່າບໍຣິການ 85 ເຊັນໂດຍອັດຕະໂນມັດໄລຍ ຊຶ່ງຈະຫັກເອົາຈາກບັນຊີເງິນສົດຂອງທ່ານໃນແຕ່ລະເທື່ອທີ່ທ່ານຖອນເງິນສົດອອກ.

ການຫັກຄ່າທັມນຽມເພີ່ມຊຶ່ງຫັກເອົາໂດຍເຈົ້າຂອງຈັກເບີກເງິນ ATMs ຫລືຈັກ POS ເພື່ອການໃຊ້ຈັກນັ້ນໃນການຖອນເງິນສົດ. ຄ່າທັມນຽມເພີ່ມ, ຖ້າມີ, ສຳຣັບການຖອນເງິນຈະຖືກຫັກອອກຈາກບັນຊີທະນາຄານເງິນສົດຂອງທ່ານໂດຍອັດຕະໂນມັດໄລຍ. ຖ້າທ່ານບໍ່ປາກເສັຽຄ່າທັມນຽມເພີ່ມ, ພຽງແຕ່ຍົກເລີກທຸຣະກິດຂອງທ່ານ ແລ້ວໄປຫາຈັກຖອນເງິນ ATMs ຫລືຈັກຈ່າຍເງິນ POS ບ່ອນໃໝ່ທີ່ບໍ່ຄິດຄ່າເພີ່ມ.

ຈະມີຂໍ້ຈຳກັດຕ່າງໆໃດບໍ່ກ່ຽວກັບການໃຊ້ບັດ EBT ເງິນສົດຂອງຂ້າພະເຈົ້າ?

ມັນເປັນການຜິດຕໍ່ກົດໝາຍຂອງຣັດໃນການໃຊ້ບັດ EBT ເງິນສົດ ຫລືຖອນເອົາເງິນສົດຈາກບັດ EBT ຂອງທ່ານໄປຫລີ້ນການພະນັນ. ການພະນັນຮວມທັງການຊື້ບັດເລກຫວຍ, ການດຶງແທັບ, ການເຈາະຮູ, ບິ້ງໄກ່, ແຂ່ງມ້າ, ການກິລາຢູ່ກາຊິໂນ, ແລະການກິລາໃດໜຶ່ງທີ່ຄວງຄອຍໂອກາດຊະນະ.

ຖ້າຂ້າພະເຈົ້າບໍ່ໃຊ້ຜົນການຊ່ວຍເຫລືອຂອງຂ້າພະເຈົ້າ ຈະມີຫຍັງເກີດຂຶ້ນ?

ຖ້າທ່ານບໍ່ໃຊ້ການຊ່ວຍເຫລືອຂອງທ່ານແນວໃດແນວໜຶ່ງຈັກຢ່າງປະມານຢ່າງໜ້ອຍທີ່ສຸດ 365 ມື້, ການຊ່ວຍເຫລືອຂອງທ່ານກໍ່ຈະຖືກຍົກເລີກ. ພ້ອມດຽວກັນ, ການຊ່ວຍເຫລືອເຫລົ່ານີ້ກໍ່ຈະບໍ່ສາມາດໃຫ້ແທນຄືນໄດ້.

ຂ້າພະເຈົ້າຈະຝາກເງິນເຂົ້າບັນຊີທະນາຄານ EBT ຂອງຂ້າພະເຈົ້າໄດ້ບໍ່?

ບໍ່, ທ່ານພຽງແຕ່ຖອນເງິນອອກໄດ້ເທົ່ານັ້ນຈາກບັນຊີເງິນສົດຂອງທ່ານ.

ການຝາກໂດຍກົງ ໝາຍຄວາມວ່າແນວໃດ?

ແທນທີ່ຈະໃຊ້ບັດ EBT, ທ່ານອາດເລືອກເອົາການຝາກເງິນສົດຂອງທ່ານໃຫ້ຝາກເຂົ້າທຸກໆເດືອນໂດຍກົງຫາບັນຊີໃໝ່ຫລືບັນຊີທະນາຄານປະຈຸບັນຂອງທ່ານກໍ່ໄດ້. ທ່ານບໍ່ສາມາດໃຊ້ການຝາກການຊ່ວຍເຫລືອບັດອາຫານຕ່າງໆທີ່ໂອນເຂົ້າໂດຍກົງໄດ້. ໃຫ້ຕິດຕໍ່ຫາຜູ້ເຮັດວຽກສັງຄົມໃນສຳນວນຂອງທ່ານ ເພື່ອຣາຍຣະອຽດເພີ່ມເຕີມ ຫລືໂທໄປຫາ 1-888-235-2954.

ຄຳว่าผู้ຄຸມບັດທາງອ້ອມ ໝາຍຄວາມວ່າແນວໃດ?

ທ່ານອາດເລືອກເອົາຄົນໃດໜຶ່ງ, ເອີ້ນວ່າຜູ້ຄຸມບັດທາງອ້ອມ, ໃຫ້ຮັບການຊ່ວຍເຫລືອຕ່າງໆແທນທ່ານ. ຜູ້ຄຸມບັດທາງອ້ອມຕ້ອງໄປຫາຫ້ອງການຫ້ອງຖິ່ນເພື່ອເຮັດບັດ EBT ຂອງຣັດວໍຊິງຕັນຂອງເອົາເຈົ້າພ້ອມທັງເລກ PIN ຂອງລາວເອງ. ຖ້າທ່ານຕ້ອງການຜູ້ຄຸມບັດທາງອ້ອມ, ໃຫ້ເລືອກເອົາຄົນທີ່ທ່ານເຊື່ອໃຈໄດ້. ໃຫ້ຈຳໄວ້ວ່າ, ການຊ່ວຍເຫລືອຕ່າງໆທີ່ຖືກສູນເສັຽຫລືຖືກລັກນັ້ນ ຈະບໍ່ສາມາດໃຊ້ຫົດແທນຄືນໄດ້. ທ່ານສາມາດຍົກເລີກບັດຂອງຜູ້ຄຸມບັດທາງອ້ອມໄດ້ໂດຍໄປຫາຫ້ອງການບໍຣິການຜູ້ຮັບການຊ່ວຍເຫລືອ. ເພື່ອຣາຍລະອຽດເພີ່ມເຕີມ ຫລືເພື່ອເອົາຮ່າງໃບຄຳຮ້ອງອະນຸມັດ, ໃຫ້ໄປຫາຫ້ອງການຂອງກົມ DSHS ຕາມຫ້ອງຖິ່ນຂອງທ່ານ.

ຂ້າພະເຈົ້າຈະໄປຫາຫ້ອງການບໍຣິການຜູ້ຮັບການຊ່ວຍເຫລືອເມື່ອໃດ?

- ໃຫ້ໄປ ຖ້າຫາກບັດຂອງທ່ານຖືກລັກຫລືຖືກເສັຽຫາຍ.
- ໃຫ້ໄປ ຖ້າທ່ານເຮັດເສັຽຫລືລືມເລກຣະຫັດ (PIN) ຂອງທ່ານ.
- ໃຫ້ໄປ ຖ້າທ່ານປ່ຽນເລກຣະຫັດ (PIN) ຂອງທ່ານ.
- ໃຫ້ໄປ ຖ້າທ່ານປາກຮູ້ຈຳນວນເງິນຂອງທ່ານທີ່ຍັງເຫລືອ.
- ໃຫ້ໄປ ຖ້າປາກຟັງການຖອນໃຊ້ສິບເທື່ອສຸດທ້າຍຂອງທ່ານ.
- ໃຫ້ໄປ ຖ້າຮ້ອງຂໍເອົາປະວັດສອງເດືອນໃນການຖອນໃຊ້ຕ່າງໆ.
- ໃຫ້ໄປ ຖ້າທ່ານມີຄຳຖາມຫລືຕ້ອງການໆຊ່ວຍເຫລືອກັບບັດຂອງທ່ານ.

ຖ້າຂ້າພະເຈົ້າມີແຜນວ່າຈະຍ້າຍ ຫລືປ່ຽນບ່ອນຢູ່ຂອງຂ້າພະເຈົ້າແດ?

ທ່ານຕ້ອງໄດ້ຕິດຕໍ່ຫາຜູ້ເຮັດວຽກສັງຄົມໃນສຳນວນຂອງທ່ານ ຖ້າທ່ານຍ້າຍຫລືປ່ຽນບ່ອນຢູ່.

This pamphlet is available in your language at your local DSHS Office.

ይህ አነስተኛ መጽሔት በቋንቋዎ በአካባቢዎ የዲኤስኤችኤስ ጽህረት ቤት ይገኛል። (Amharic)

إن هذه النسخة موفرة لك بلغتك في مكتب الـ DSHS في الضاحية التي تسكن بها. (Arabic)

 កូនសៀវភៅនេះមានផ្តល់ជូនជាភាសារបស់លោកអ្នកនៅនឹងការិយាល័យ DSHS ប្រចាំតំបន់របស់លោកអ្នក ។ (Cambodian)

本小冊備有您的語言版本，可向您當地的 DSHS 辦事處索取。(Chinese)

این جزوه در زبان شما در اداره خدمات اجتماعي و درماني DSHS منطقه ایتان در دسترس مي باشد. (Farsi)

Dlaim ntawv nuav muaj txhais ua koj yaam lug hab nwg nyob rua ntawm lub DSHS kws ze koj ko. (Hmong)

이 팜플렛의 한국어 팜플렛은 귀하지역 관할 보건사회부(DSHS) 사무소에 비치돼 있습니다.(Korean)

ປຶ້ມຄູ່ມືຫົວນີ້ມີໃນວິທີໃດ້ໃນພາສາຂອງທ່ານຢູ່ທີ່ຫ້ອງການ DSHS ທ້ອງຖິ່ນຂອງທ່ານ. (Laotian)

ਇਹ ਪੈਂਫਲੇਟ ਤੁਹਾਨੂੰ ਮਿਲ ਸਕਦਾ ਹੈ ਆਪ ਦੀ ਭਾਸ਼ਾ ਵਿਚੱ ਆਪਣੇ ਸਥਾਨੀ DSHS ਦਫਤਰ ॥ (Punjabi)

Acest pamflet este disponibil în limba dumneavoastră la oficiul DSHS local. (Romanian)

Вы можете получить эту брошюру на своём языке в своём местном офисе DSHS.(Russian)

O lo'o maua le tusi lea i lau gagana i le ofisa o le Welfare (DSHS). (Samoan)

Ovaj pamflet je dostupan i na vašem jeziku u vašem mjesnom DSHS uredu. (Serbo-Croatian)

Waraaqahani waxaad ka helikartaa xafiiska Walfeerka, DSHS, ee kuu dhow, iyaga oo ku qorran afgaaga. (Somali)

Ang pamphlet na ito ay nakasulat rin sa Tagalog at makukuha sa tanggapan ng DSHS na pinakamalapit sa inyo. (Tagalog)

እዚ መጽሔት እዚ ብቓንቋኹም ኣብ ከባቢኹም ዝርከብ ቤት ጽሕፈት ዌልፌር ይርከብ (Tigrigna)

Ви можете одержати цю брошуру на своїй мові в своєму місцевому офісі DSHS.(Ukrainian)

Tập sơ liệu này hiện có bằng ngôn ngữ của quí vị tại văn phòng DSHS địa phương.(Vietnamese)

USDA ແມ່ນຜູ້ໃຫ້ການບໍຣິການແລະເປັນນາຍจ้างที่ให้โอกาสที่เท่ากัน.

©2005 JPMorgan Chase & Co. ສງວນສິດໄວ້ທັງໝົດ.

Washington State Department of Social & Health Services
DSHS 22-310(X) LA (Rev. 4/05)

ບັດ EBT ຂອງຣັດວໍຊິງຕັນ ຂອງທ່ານ.



ເພື່ອຂ່າວຂໍ້ມູນເຣື່ອງບັນຊີທະນາຄານຂອງທ່ານ, ໃຫ້ເບິ່ງ:

www.ebtaccount.jpmorgan.com

ຫລືໂທຫາ

ຫ້ອງການບໍຣິການຜູ້ຮັບການຊ່ວຍເຫລືອ

1-888-328 -9271 (ໂທຈ່າຍເງິນຕ່າງໆບໍ່ຄິດໄລ່ເວົ້ານຳ)

711 (TTY ຣະບົບທ່າຍທອດສຽງຂອງຣັດ)

1-800-833-6385 (ສາຍໂທຕົວເປັນຕຸ່ມ)

ຂໍສະແດງຄວາມຍິນດີຕ້ອນຮັບຕໍ່ໂຄງການໂອນຜົນການຊ່ວຍເຫລືອຕ່າງໆທາງອີເລັກໂທຣນິກຂອງຣັດວໍຊິງຕັນ (EBT) ແລະວິທີການຕິດຕາມຮັກສາຄຸ້ມຄອງບັດ (EBT) ຂອງຣັດວໍຊິງຕັນທີ່—ປອດໄພ, ສະດວກ, ແລະງ່າຍສໍາຣັບທ່ານເພື່ອຮັບເອົາ ຜົນການຊ່ວຍເຫລືອຕ່າງໆ.

ຖ້າທ່ານມີເງື່ອນໄຂໄດ້ຮັບການຊ່ວຍເຫລືອຕ່າງໆດ້ານອາຫານພື້ນຖານ, ທ່ານສາມາດໃຊ້ບັດ EBT ທີ່ໄຕ່ສວນຂອງຣັດວໍຊິງຕັນເພື່ອ:
- ຊື້ເຍື່ອງອາຫານທີ່ຖືກເລືອກຕາມຮ້ານຄ້າທີ່ບໍ່ງບອກໄວ້ສະເພາະ

ຖ້າທ່ານມີເງື່ອນໄຂໄດ້ຮັບການຊ່ວຍເຫລືອຕ່າງໆດ້ານເງິນສົດ, ທ່ານສາມາດໃຊ້ບັດ EBT ຂອງຣັດວໍຊິງຕັນເພື່ອ:
- ເອົາເງິນສົດຫລືຊື້ເຄື່ອງຕາມຮ້ານທີ່ເຂົ້າມີສ່ວນປະກອບນໍາ
- ຖອນເງິນການຊ່ວຍເຫລືອຈາກຈັກຖອນເງິນ ATM ຕ່າງໆໄດ້.

ມັນງ່າຍອີຫລີ!

ວິທີໃຊ້ບັດ EBT ຂອງຣັດວໍຊິງຕັນຂອງທ່ານ ຕາມຮ້ານຄ້າ

1. ໃຫ້ຮູ້ຈໍານວນເງິນທີ່ທ່ານຍັງມີຢູ່ ກ່ອນການໄປຊື້ເຄື່ອງຂອງທ່ານ.
2. ໃຫ້ຮູດບັດ EBT ຂອງຣັດວໍຊິງຕັນຂອງທ່ານໃສ່ຈຸດຈັກໃຊ້ບັດຊື້ເຄື່ອງ (POS) ຫລື ຍື່ນບັດຂອງທ່ານໃຫ້ສົມຄູນກັບຜູ້ຂາຍເງິນ
3. ໃຫ້ໝັ້ນໃຈວ່າທ່ານບອກຄົນຂາຍເຄື່ອງວ່າ ຈະຄິດໄລ່ເງິນຈາກບັນຊີທະນາຄານໃດ (ອາຫານຫລືເງິນສົດ).
4. ໃຫ້ຕີເລກປະຈໍາຕົວ (PIN) ສີ່ຕົວຂອງທ່ານ ໃສ່ຊູ່ເລກຣະຫັດ. ຈັກໃຊ້ບັດຊື້ເຄື່ອງ ຈະສະແດງບອກ****.
5. ໃຫ້ຍັບດຸມທີ່ຂຽນວ່າ OK ຫລືວ່າ ENTER
6. ຄົນຂາຍຕີຈໍານວນເງິນຊື້ເຂົ້າໄປ, ຖ້າຖືກຕ້ອງ, ໃຫ້ທ່ານຍັບດຸມທີ່ຂຽນວ່າ YES
7. ຄົນຂາຍຈະຍື່ນໃບຮັບເງິນໃຫ້ທ່ານ; ໃຫ້ໝັ້ນໃຈວ່າ ຂໍ້ມູນໃນໃບຮັບເງິນນັ້ນຖືກຕ້ອງ.
8. ໃຫ້ເກັບໃບຮັບເງິນນັ້ນໄວ້ ເພື່ອທ່ານຈະໄດ້ຮູ້ຈໍານວນໃໝ່ເງິນເຫລືອຂອງທ່ານ ເວລາຊື້ເທື່ອໜ້າ.

ວິທີການໃຊ້ຕ່າງໆອາດແຕກຕ່າງກັນໃນຈັກຈ່າຍເງິນ (POS) ທີ່ທ່ານໃຊ້. ໃຫ້ຖາມຄົນຂາຍ ຖ້າທ່ານຫາກຕ້ອງການຫຍຸ່ຊ່ວຍເຫລືອ.

ມີແຕ່ຈໍານວນຊື້ທີ່ກົງກັບຣາຄາທໍ່ນັ້ນທີ່ຖືກຫັກອອກຈາກບັນຊີເງິນຊ່ວຍເຫລືອອາຫານຂອງ ທ່ານ. ທາງຮ້ານຄ້າຈະບໍ່ທອນເງິນຈາກການຊື້ອາຫານຊ່ວຍເຫລືອຕ່າງໆນັ້ນແກ່ທ່ານໄດ້.

ທ່ານອາດໃຊ້ການຊ່ວຍເຫລືອເງິນສົດຂອງທ່ານຕາມຮ້ານຕ່າງໆເພື່ອຖອນເງິນທໍ່ນັ້ນ ຫລືເພື່ອ ຊື້ອາຫານແລະເຄື່ອງຂອງຕ່າງໆທີ່ບໍ່ແມ່ນອາຫານພ້ອມກັນ (ເຊັ່ນສະບູ, ໄດເປີ, ເປັນຕົ້ນ) ນັ້ນໄດ້. ທາງຮ້ານບັງອາດທອນເງິນສົດແກ່ທ່ານ ຖ້າທ່ານຫາກຊື້ຂອງຕ່າງໆຈາກບັນຊີ ເງິນສົດຂອງທ່ານ. ຖ້າທ່ານມີຄໍາຖາມ, ໃຫ້ຖາມຄົນຂາຍນັ້ນ.

ວິທີໃຊ້ບັດ (EBT) ຂອງຣັດວໍຊິງຕັນຂອງທ່ານ ຕາມ ເງິນອັດຕະໂນມັດ (ATM)

(ເພື່ອຖອນເງິນສົດຊ່ວຍເຫລືອທໍ່ນັ້ນ. ສ່ວນບັນຊີການຊ່ວຍເຫລືອຕ່າງໆດ້ານອາຫານ ພື້ນຖານບໍ່ສາມາດເຂົ້າຫາໂດຍຜ່ານຈັກ ATM ໄດ້)

1. ໃຫ້ສອດຫລືຮູດບັດຂອງທ່ານ
2. ໃຫ້ຕີເລກຣະຫັດສ່ວນຕົວ (PIN) ເຂົ້າໃສ່ແລ້ວຍັບດຸມທີ່ຂຽນວ່າ OK ຫລືວ່າ ENTER.
3. ໃຫ້ເລືອກຍັບດຸມທີ່ຂຽນວ່າ WITHDRAW CASH ຈາກນັ້ນໃຫ້ເລືອກຍັບຄໍາວ່າ CHECKING.
4. ຕີເລກຂອງຈໍານວນເງິນຕັມເຂົ້າໄປ (ເຊັ່ນ $20, $40, $60 ເປັນຕົ້ນ).
5. ຖ້າມີການຄິດໄລ່ເພີ່ມ, ໃຫ້ເລືອກເອົາຄໍາວ່າ YES ເພື່ອຕົກລົງຮັບເອົາແລ້ວສືບຕໍ່.
6. ໃຫ້ເອົາບັດຂອງທ່ານ, ໃບຮັບເງິນ, ແລະເງິນສົດຂອງທ່ານ.
7. ໃຫ້ນັບເງິນຂອງທ່ານ ແລະຫຽບກັບໃບຮັບເງິນຂອງທ່ານ.
8. ໃຫ້ເກັບໃບຮັບເງິນໄວ້ ເພື່ອທ່ານຈະໄດ້ຕິດຕາມຮູ້ເງິນເຫລືອ ເວລາທ່ານຕ້ອງການ ເງິນສົດເທື່ອໜ້າ.

ນັນອາດໃຊ້ການຈັດການຫລາຍຫຼວງເທື່ອເພື່ອຖອນເງິນສົດຊ່ວຍເຫລືອຂອງທ່ານທັງໝົດຂອກຈາກ ຈັກຖອນເງິນ ATM ຖ້າຈັກຫາກກໍານົດຈໍານວນເງິນສົດທີ່ທ່ານຖອນແຕ່ລະເທື່ອ. ຈະມີຄ່າ ທໍານຽມຈໍານວນ 85 ເຊັນ ແຕ່ລະເທື່ອທີ່ທ່ານຖອນເງິນ ຊຶ່ງຈະຕັດເອົາຈາກບັນຊີເງິນເຫລືອ ຂອງທ່ານນັ້ນໂດຍອັດຕະໂນມັດໂລດ, ຊຶ່ງເພີ່ມຈາກການຄິດຄ່າຕ່າງໆຂອງທະນາຄານ.

ຖ້າຈັກ ATM ຫາກກັກບັດຂອງທ່ານໄວ້, ໃຫ້ຕິດຕໍ່ຫາຫ້ອງການບໍຣິການລູກຄ້າຂອງກົມ DSHS ເພື່ອເອົາບັດໃໝ່ແທນ.

ຄໍາຖາມແລະຄໍາຕອບຕ່າງໆກ່ຽວກັບບັດ EBT ຂອງຣັດວໍຊິງຕັນ

ອ້າພະເຈົ້າໄດ້ການຊ່ວຍເຫລືອຕ່າງໆຂອງອ້າພະເຈົ້າຈາກບັດ EBT ຂອງຣັດວໍຊິງຕັນໄດ້ແນວໃດ?

ແຕ່ລະເດືອນ ການຊ່ວຍເຫລືອຂອງທ່ານຈະເພີ່ມເຂົ້າຫາບັນຊີທະນາຄານຂອງທ່ານ ໂດຍອັດຕະໂນມັດໂລດ. ທ່ານຈະໃຊ້ບັດ EBT ຂອງຣັດວໍຊິງຕັນຂອງທ່ານໃນແຕ່ລະເດືອນ ເພື່ອຮັບການຊ່ວຍເຫລືອຕ່າງໆຂອງທ່ານ. ໃນເມື່ອທ່ານຫາກໃຊ້ບັດຂອງທ່ານເພື່ອເອົາເງິນສົດ ຫລືຊື້ເຄື່ອງຂອງຕ່າງໆນັ້ນ, ບັນຊີຈໍານວນເງິນຂອງທ່ານກໍ່ຈະລຸດລົງ.

ອ້າພະເຈົ້າໄດ້ການຊ່ວຍເຫລືອຕ່າງໆຂອງອ້າພະເຈົ້າເມື່ອໃດ?

ການຊ່ວຍເຫລືອຕ່າງໆຈະຝາກເຂົ້າໃສ່ບັນຊີບັດ EBT ຂອງທ່ານໃນມື້ກຽວກັນຂອງແຕ່ລະ ເດືອນ, ຫັງໆທີ່ວ່າມັນຈະຕົກຖືກມື້ພັກງານ ຫລື ມື້ຢຸດຣາຊການກໍ່ຕາມ. ໃຫ້ຊອກເບິ່ງເລກ ສຸດທ້າຍຂອງໝ່ວຍການຊ່ວຍເຫລືອບັດອາຫານພື້ນຖານຂອງທ່ານ (AU) ໃນຕາຕະຣາງບັນຊີ ຢູ່ລຸ່ມນີ້ ແລ້ວໃຫ້ເບິ່ງທາງຂວາງເພື່ອຊອກເບິ່ງມື້ຂອງເດືອນທີ່ການຊ່ວຍເຫລືອອາຫານຂອງທ່ານ ຈະມີເຂົ້າຫາບັດ EBT ຂອງຣັດວໍຊິງຕັນຂອງທ່ານ. ມື້ຂອງເດືອນທີ່ການຊ່ວຍເຫລືອ ອາຫານຂອງທ່ານຈະມີນັ້ນກໍ່ຍັງໄດ້ຖືກພິມຢູ່ໃນຈົດໝາຍແຈ້ງການອະນຸມັດຊ່ວຍອາຫານ ຂອງທ່ານນັ້ນຄືກັນ. ການຊ່ວຍເຫລືອເງິນສົດຂອງທ່ານຈະມີໃຫ້ທຸກໆວັນທີໜຶ່ງຂອງທຸກເດືອນ. ການຊ່ວຍເຫລືອທັງໝົດຈະມີໃຫ້ປະມານ 9:00 ໂມງເຊົ້າຕາມເວລາຂອງເຂດປາຊິຟິກ ການຊ່ວຍເຫລືອໃດໜຶ່ງທີ່ທ່ານບັງມີເຫລືອຄ້າງຢູ່ໃນທຸກທ້າຍເດືອນ, ກໍ່ຈະສືບຕໍ່ສົ່ງໄປຫາ ເດືອນໜ້າ.

ຖ້າເລກປະຈໍາຕົວຂອງໝ່ວຍການຊ່ວຍເຫລືອ ບັດອາຫານພື້ນຖານຂອງທ່ານຫາກສຸດດ້ວຍ	ທ່ານຈະໄດ້ຮັບການຊ່ວຍເຫລືອ ບັດອາຫານໃນມື້
1	ວັນທີ 1 ຂອງເດືອນ
2	ວັນທີ 2 ຂອງເດືອນ
3	ວັນທີ 3 ຂອງເດືອນ
4	ວັນທີ 4 ຂອງເດືອນ
5	ວັນທີ 5 ຂອງເດືອນ
6	ວັນທີ 6 ຂອງເດືອນ
7	ວັນທີ 7 ຂອງເດືອນ
8	ວັນທີ 8 ຂອງເດືອນ
9	ວັນທີ 9 ຂອງເດືອນ
0	ວັນທີ 10 ຂອງເດືອນ

ອ້າພະເຈົ້າຈະໃຊ້ບັດ EBT ຂອງຣັດວໍຊິງຕັນໄດ້ຢູ່ໃສ?

ທ່ານສາມາດໃຊ້ບັດ EBT ຂອງຣັດວໍຊິງຕັນໄດ້ຢູ່ຕາມຮ້ານ ແລະຈັກຖອນເງິນ(ATMs) ທັງຫລາຍທີ່ເຂົ້າປະກອບສ່ວນ (ຈັກຖອນເງິນສໍາຣັບການຊ່ວຍເຫລືອເງິນສົດທໍ່ນັ້ນ) ໃນທົ່ວປະເທດ. ທ່ານບັງສາມາດໃຊ້ບັດຂອງທ່ານໄດ້ທຸກບ່ານທີ່ເຫັນກາເຄື່ອງຫມາຍ QUEST ຕິດໃສ່. ຖ້າທ່ານບໍ່ເຫັນກາ QUEST, ໃຫ້ຖາມຜູ້ຈັດການຮ້ານຄ້າວ່າ ທ່ານຈະໃຊ້ບັດຂອງທ່ານ ຊື້ເຄື່ອງໃນຮ້ານ ຫລືຖອນເອົາເງິນສົດຊ່ວຍເຫລືອຕ່າງໆໄດ້ບໍ່.

ຖ້າອ້າພະເຈົ້າເຮັດບັດເສັຽແລ້ວຈະເຮັດແນວໃດ?

ຖ້າບັດ EBT ຂອງຣັດວໍຊິງຕັນຂອງທ່ານເສັຽ, ຖືກລັກ, ຫລືຖືກທໍາຮ້າຍ, ແລະທ່ານຕ້ອງການ ຢາກໄດ້ບັດໃໝ່ແທນ, ໃຫ້ໂທຫາຫ້ອງການບໍຣິການຜູ້ຮັບການຊ່ວຍເຫລືອໃນເລກທີ່ບໍ່ຕ້ອງ ເສັຽເງິນ ໃນເລກ 1-888-328-9271 ຫລືໄປຫາຫ້ອງການ DSHS ຕາມຫ້ອງຖິ່ນ ຂອງທ່ານ.

ເລກບັດຂອງອ້າພະເຈົ້າແມ່ນຫຍັງ?

ເລກບັດຂອງທ່ານ ເປັນເລກ 16 ຕົວ ຊຶ່ງຢູ່ດ້ານໜ້າຂອງບັດຂອງທ່ານນັ້ນ.

ຖ້າບັດຂອງອ້າພະເຈົ້າໃຊ້ການບໍ່ໄດ້ ແລ້ວຈະເຮັດແນວໃດ?

ໃຫ້ໂທຫາຫ້ອງການບໍຣິການຜູ້ຮັບການຊ່ວຍເຫລືອ ແລະເພີ່ນຈະຊ່ວຍທ່ານ. ເລກນີ້ຈະຢູ່ດ້ານ ຫລັງບັດຂອງທ່ານ. ການບໍຣິການຜູ້ຮັບການຊ່ວຍເຫລືອຈະມີຕລອດ 24 ຊົ່ວໂມງຕໍ່ມື້ 7 ມື້ຕໍ່ອາທິດ (ໂທຣະສັບທີ່ຈ່າຍເງິນແມ່ນບໍ່ໄດ້ຖືກຣວມເຂົ້າ).

ຖ້າມີການຜິດພາດຕໍ່ບັນຊີໃນການເຮັດວຽກຊື້ຂາຍຕໍ່ບັດຂອງອ້າພະເຈົ້າເດ, ແລ້ວຈະເຮັດແນວໃດ?

ເມື່ອມີການຈ່າຍຫລາຍຫລືໜ້ອຍໂພດຈາກບັນຊີບັດ EBT ຂອງທ່ານ ຍ້ອນບັນຫາ ຄວາມຜິດພາດຂອງຈັກຄອມພິວເຕີ, ການແກ້ຄວາມຜິດພາດອາດເຮັດໄດ້ຕໍ່ບັນຊີເງິນ ເຫລືອຂອງທ່ານ. ການແກ້ຄວາມຜິດພາດນີ້ອາດຈະມີຜົນສະທ້ອນຕໍ່ຈໍານວນເງິນຄ້າງຂອງ ທ່ານໃນເດືອນນີ້ຫລືເດືອນຕໍ່ໄປ. ທ່ານອາດຈະໄດ້ຮັບຈົດໝາຍແຈ້ງການແກ້ຄວາມຜິດພາດ ທາງໄປສະນີເຣື່ອງການດັດແປງຕໍ່ບັດ EBT ຂອງທ່ານຖ້າມັນລຸດຈໍານວນເງິນຄ້າງຂອງທ່ານ.

ອ້າພະເຈົ້າຄວນຈະຮັກສາບັດແນວໃດ?

1. ເຊັ່ນຊື່ຢູ່ດ້ານຫລັງຂອງບັດ
2. ບ່າຂຽນເລກຣະຫັດສ່ວນຕົວໃສ່ໃນບັດຂອງທ່ານ.
3. ຮັກສາບັດຂອງທ່ານໃຫ້ປອດໄພແລະສະອາດ.
4. ບໍ່ໃຫ້ນັບບັດຂອງທ່ານ.
5. ຮັກສາບັດໃຫ້ຫ່າງໄກຈາກແມ່ເລັກແລະເຄື່ອງອີເລັກໂທຣນິກຕ່າງໆ ເຊັ່ນ ໂທຣະຫັດ, ວິທະຍຸ, ເຄື່ອງສາຍວິຊີອາຣ່, ໂມໂລຣວຟ, ແລະອື່ນໆ.
6. ບໍ່ໃຫ້ປະຖິກໄດຍກົງຕໍ່ແສງແດດ (ເຊັ່ນຢູ່ແຜ່ນຢູ່ຫນ້າຫ່ອນຮັບຣົດຂອງທ່ານ).
7. ບໍ່ໃຫ້ຖິ້ມບັດຂອງທ່ານ; ທ່ານໃຊ້ບັດເກົ່ານັ້ນທຸກເດືອນ ຕາບໃດທີ່ທ່ານຫາກບັງຮັບ ການຊ່ວຍເຫລືອຕ່າງໆຢູ່.

ເລກຣະຫັດສ່ວນຕົວ (PIN)ແມ່ນຫຍັງ?

ເລກ PIN ແມ່ນເລກລັບສີ່ຕົວຊຶ່ງຈະນຸຍາດໃຫ້ທ່ານທໍ່ນັ້ນໄດ້ໃຊ້ບັດ EBT ຂອງຣັດວໍຊິງຕັນ ຂອງທ່ານ. ຖ້າທ່ານໄດ້ຮັບບັດຂອງທ່ານທາງໄປສະນີ, ທ່ານຕ້ອງໄດ້ໂທຫາຫ້ອງການບໍຣິ ການຜູ້ຮັບການຊ່ວຍເຫລືອເພື່ອເລືອກຫລືປ່ຽນເລກ PIN ຂອງທ່ານໃໝ່. ບ່າບອກເລກ PIN ແກ່ຜູ້ໃດ! ຖ້າຜູ້ໃດຫາກຮູ້ເລກ PIN ຂອງທ່ານ, ເຂົາເຈົ້າສາມາດລັກເອົາການ ຊ່ວຍເຫລືອຂອງທ່ານທັງໝົດອອກໄດ້-ແລະມັນບໍ່ສາມາດຫົດແທນຄືນໄດ້.

ຖ້າອ້າພະເຈົ້າລືມເລກ PIN ຈະເຮັດແນວໃດ?

ຖ້າທ່ານລືມ ຫລືຢາກປ່ຽນເລກ PIN, ທ່ານສາມາດໄປຫາຫ້ອງການບໍຣິການຜູ້ຮັບການ ຊ່ວຍເຫລືອ ຫລືໄປຫາຫ້ອງການຂອງກົມ DSHS ຕາມເຂດຫ້ອງຖິ່ນເພື່ອເລືອກເລກ PIN ໃໝ່. ທ່ານຄວນຈະເລືອກເລກສີ່ຕົວທີ່ທ່ານຈະຈື່ໄດ້ງ່າຍ,ແຕ່ບ່າໃຫ້ຜູ້ອື່ນຮູ້ໄດ້.

ຖ້າອ້າພະເຈົ້າຕີເລກ PIN ຜິດເຂົ້າໄປດົນ?

ຖ້າທ່ານມີບັນຫາໃນການຈື່ເລກ PIN ຂອງທ່ານ, ບ່າຄິດເຖົ້າເອົາເລກ PIN ຂອງທ່ານ ຕີເຂົ້າໃສ່ຈັກຊື້ເຄື່ອງ (POS) ຫລືຈັກຖອນເງິນ (ATM). ຖ້າທ່ານຫາກຕີເລກ PIN ທີ່ຜິດເຂົ້າໄປ, ທ່ານມີແຕ່ໂອກາດເຮັດໄດ້ສາມເທື່ອຫໍ່ນັ້ນໃນການຕີເລກເຂົ້າທີ່ຖືກເຂົ້າໃສ່. ຖ້າເລກ PIN ທີ່ຖືກຕ້ອງຫາກບັງບໍ່ຕີເຂົ້າໄດ້ເທື່ອທີ່ສີ່, ທ່ານບໍ່ສາມາດໃຊ້ມັນອີກຈົນກວ່າ ຫລັງຈາກທ່ຽງຄືນຍ້ອນວ່າການຈໍ້ງໍລໍໄດ້ວາງໃສ່ບັດຂອງທ່ານ. ໃນບາງກໍຣະນີ, ບັດຂອງທ່ານ ອາດຖືກຢຶດໄວ້ໂດຍຈັກຖອນເງິນ (ATM). ຖ້າຈັກຖອນເງິນ (ATM) ຢຶດບັດຂອງທ່ານ ໄວ້, ໃຫ້ຕິດຕໍ່ຫາຫ້ອງການບໍຣິການຜູ້ຮັບການຊ່ວຍເຫລືອຫລືໄປຫາຫ້ອງການຂອງກົມ DSHS ຕາມຫ້ອງຖິ່ນຂອງທ່ານເພື່ອເອົາບັດໃໝ່ແທນ.

ຖ້າຜູ້ອື່ນຮູ້ເລກ PIN ຂອງອ້າພະເຈົ້າເດ ອ້າພະເຈົ້າຄວນຈະເຮັດແນວໃດ?

ໃຫ້ເລືອກເລກ PIN ໃໝ່ທັນທີໂລດ ໂດຍໂທຫາຫ້ອງການບໍຣິການຜູ້ຮັບການຊ່ວຍເຫລືອ ຫລືປ່ຽນເລກ PIN ທາງໂທຣະສາຍ (Online) ທີ່ www.ebtaccount.jpmorgan.com.

ອ້າພະເຈົ້າຈະຮູ້ເງິນເຫລືອຄ້າງໃນບັນຊີໄດ້ແນວໃດ?

ທາງງ່າຍທີ່ສຸດທີ່ຈະຮູ້ເງິນເຫລືອຄ້າງໃນບັນຊີຂອງທ່ານກໍ່ຄືເກັບຮັກສາໃບຮັບເງິນທຸກເທື່ອ ເຫລົ່ານັ້ນໄວ້. ຖ້າທ່ານບໍ່ມີໃບຮັບເງິນທັງໝົດຂອງທ່ານ, ທ່ານອາດກວດຈໍານວນ ເງິນເຫລືອຄ້າງໃນບັນຊີຂອງທ່ານທີ່ www.ebtaccount.jpmorgan.com, ຫລືໂທຫາຫ້ອງການບໍຣິການຜູ້ຮັບການຊ່ວຍເຫລືອ. ທ່ານຄວນຈະຮູ້ຈໍານວນເງິນເຫລືອ ຄ້າງໃນບັນຊີຂອງທ່ານກ່ອນທີ່ທ່ານຈະໄປຊື້ເຄື່ອງທຸກເທື່ອ.